## ມິຊຊາອາທິດທີ 26 ກໍານົດທໍາມະດາ ປີ B
## ວັນທີ 26 ກັນຍາ 2021



**ພຣະວໍລະສານໂດຍນັກບຸນມັກໂກ 9, 37-42, 44, 46-47**

ໃນເວລານັ້ນ, ຢວງທູນພຣະເຢຊູເຈົ້າວ່າ: "ພຣະອາຈານເອີຍ, ພວກຂ້ານ້ອຍໄດ້ເຫັນຄົນຜູ້ໜຶ່ງໄລ່ຜີເດຊະພຣະນາມຂອງພຣະອົງ, ພວກຂ້ານ້ອຍຈຶ່ງໄດ້ຫ້າມເຂົາ, ຍ້ອນວ່າຄົນຜູ້ນັ້ນບໍ່ໄດ້ເປັນໝູ່ກັບພວກເຮົາ". ພຣະເຢຊູເຈົ້າຈຶ່ງຕອບວ່າ: "ພວກເຈົ້າຢ່າຫ້າມເຂົາ, ຍ້ອນວ່າບໍ່ມີໃຜໃຊ້ພຣະນາມຂອງເຮົາມາທໍາອັດສະຈັນ, ແລ້ວມາເວົ້າຮ້າຍປ້າຍສີໃສ່ເຮົາໄດ້". ຜູ້ໃດບໍ່ຂັດສູ້ກັບພວກເຮົາກໍເປັນໝູ່ກັບພວກເຮົາ. ຜູ້ໃດທານນໍ້າຈອກໜຶ່ງໃຫ້ພວກເຈົ້າກິນ, ຍ້ອນພວກເຈົ້າເປັນຄົນຂອງພຣະກຣິສໂຕ, ເຮົາບອກພວກເຈົ້າເປັນຄວາມຈິງວ່າ ຄົນຜູ້ນັ້ນຈະບໍ່ຂາດບໍາເໜັດລາງວັນດອກ.

ຖ້າຜູ້ໃດເປັນເຫດໃຫ້ເດັກຜູ້ໜຶ່ງ ໃນພວກນີ້ທີ່ເຊື່ອຕ້ອງຕົກໃນບາບ, ກໍໃຫ້ເອົາຫີນບົດແປ້ງທີ່ຕົວລາແກ່ນັ້ນມາຜູກໃສ່ຄໍມັນແລ້ວຖິ້ມມັນລົງທະເລຄົງຈະດີກວ່າ. ຖ້າມືຂອງເຈົ້າເປັນເຫດໃຫ້ເຈົ້າຕົກໃນບາບ, ກໍຈົ່ງຕັດມັນຖິ້ມເສຍ, ເປັນຄົນແຂນກຸດເບື້ອງໜຶ່ງ ເຂົ້າສະຫວັນກໍຍັງດີກວ່າມີສອງມືໃນໄຟທີ່ບໍ່ມີຍາມມອດ.

ຖ້າຕີນຂອງເຈົ້າເປັນເຫດໃຫ້ເຈົ້າຕົກໃນບາບ,ກໍຈົ່ງຕັດມັນແກວ່ງຖິ້ມເສຍ, ເປັນຄົນຂາກຸດເບື້ອງໜຶ່ງເຂົ້າສະຫວັນ ກໍຍັງດີກວ່າມີສອງຂາໃນນະລົກ. ຖ້າຕາຂອງເຈົ້າເປັນເຫດໃຫ້ເຈົ້າຕົກໃນບາບ, ກໍຈົ່ງຄວັດມັນແກວ່ງຖິ້ມເສຍ, ເປັນຄົນຕາລໍເຂົ້າໃນອານາຈັກຂອງພຣະເຈົ້າ ກໍດີກວ່າມີສອງຕາຢູ່ໃນນະລົກ, ບ່ອນໜອນບໍ່ຕາຍບ່ອນໄຟບໍ່ມອດເລີຍ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ທັດສະນະທ່າທີຂອງຢວງ, ລູກສິດຂອງພຣະເຢຊູເຈົ້າໃນພຣະວໍລະສານວັນນີ້ ກໍເໝືອນກັບທັດສະນະທ່າທີຂອງຢໍຊູເອ, ຜູ້ຮ່ວມງານກັບໂມແຊໃນບົດອ່ານທີໜຶ່ງຈາກໜັງສືສຳມະໂນ. ເມື່ອຢວງແລະຢໍຊູເອເຫັນຄົນທີ່ບໍ່ໄດ້ຢູ່ໃນກຸ່ມຂອງພວກເຂົາໄດ້ຮັບພຣະຈິດເຈົ້າແລະໄດ້ທຳອັດສະຈັນໃນນາມຂອງພຣະອົງ, ພວກເຂົາກໍບໍ່ດີໃຈແລະຢາກຫ້າມປາມພວກເຂົາໄວ້. ແຕ່ຄຳຕອບຂອງພຣະເຢຊູເຈົ້າວັນນີ້ກໍເໝືອນກັບຄຳຕອບຂອງໂມແຊໃນບົດອ່ານທີໜຶ່ງວ່າ: “ຜູ້ໃດບໍ່ຂັດສູ້ກັບພວກເຮົາກໍເປັນໝູ່ກັບພວກເຮົາ”. ໝາຍວ່າພຣະນາມຂອງພຣະເຈົ້າແລະອານາຈັກຂອງພຣະອົງບໍ່ໄດ້ຈຳກັດແຕ່ໃນກຸ່ມຂອງຄົນຢິວຫລືພວກສາວົກຂອງພຣະອົງເທົ່ານັ້ນ, ແຕ່ຄວາມຮອດແລະອານາຈັກຂອງພຣະອົງແມ່ນສຳລັບໝົດທຸກຄົນທີ່ເຊື່ອໃນພຣະນາມຂອງພຣະອົງ. ກົງກັນຂ້າມ, ຜູ້ທີ່ເຊື່ອໃນພຣະອົງແຕ່ເປັນເຫດໃຫ້ຄົນອື່ນຕ້ອງສະດຸດລົ້ມຫລືຕົກໃນບາບ ຜູ້ນັ້ນບໍ່ສົມເປັນສິດຂອງພຣະອົງແລະບໍ່ມີສ່ວນຮ່ວມໃນອານາຈັກຂອງພຣະອົງດ້ວຍ. ຜູ້ນັ້ນສົມຕ້ອງໂຍນເຂົ້າໃນບ່ອນມືດທີ່ມີແຕ່ໄຟແລະສຽງຮ້ອງໄຫ້ກັດແຂ້ວ.

ວາຈາຂອງພຣະເຈົ້າວັນນີ້ກໍເປັນຄຳຖາມສຳລັບພວກເຮົາຜູ້ເປັນກຣິສຕັງເປັນສິດຂອງພຣະເຢຊູເຈົ້າ. ພວກເຮົາໄດ້ດຳເນີນຊີວິດຄວາມເຊື່ອຂອງພວກເຮົາຢ່າງໃດ? ພວກເຮົາໄດ້ເປັນພິຍານແລະປະກາດເຖິງພຣະນາມຂອງພຣະອົງໃຫ້ຄົນອື່ນຮູ້ຈັກບໍ? ຫລືພວກເຮົາໃຊ້ພຣະນາມຂອງພຣະອົງເພື່ອຜົນປະໂຫຍດສ່ວນຕົວ. ຫລືເພື່ອທຳໃຫ້ຄົນອື່ນຕ້ອງສະດຸດລົ້ມແລະຂາດຄວາມເຊື່ອໄປ? ຖ້າພວກເຮົາໄດ້ກະທຳສິ່ງທີ່ບໍ່ຖືກຕ້ອງແລະສອດຄ່ອງກັບນາມຊື່ກຣິສຕັງແລະນາມຊື່ຂອງພຣະເຈົ້າ ກໍໃຫ້ພວກເຮົາຜັນປ່ຽນຊີວິດແລະກັບມາໃຊ້ຊີວິດໃຫ້ສອດຄ່ອງກັບນາມຊື່ກຣິສຕັງນັ້ນເທີ້ນ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ດຳລົງຊີວິດສົມກັບເປັນສິດຂອງພຣະອົງ ຄືເປັນພິຍານແລະເປັນຜູ້ປະກາດເຖິງຄວາມຮັກແລະພຣະນາມຂອງພຣະບິດາໃຫ້ທຸກຄົນຮູ້ຈັກ. ເພື່ອລູກແລະທຸກຄົນຈະໄດ້ມີສ່ວນໃນອານາຈັກສະຫວັນຂອງພຣະອົງດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ